ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ..03.../ສປສສ

ນະຄອນຫຼວງວຽງຈັນ, ວັນທີ23./01../2014

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາ ປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານທຸກຂັ້ນ ໃນຂອບເຂດທົ່ວປະເທດ

ເລື່ອງ: ການແຈ້ງສິດໃນການຂໍອຸທອນ ແລະ ຂໍລົບລ້າງ ໃຫ້ແກ່ຄູ່ຄວາມ

ອີງຕາມ ມາດຕາ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ອີງຕາມ ມາດຕາ 214, 215 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ມາດຕາ 257 ແລະ 292 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;

ໃນໄລຍະຜ່ານມາ ການຂໍອຸທອນ ຫຼື ການຂໍລົບລ້າງ ຄຳຕົກລົງຂອງສານ ຈ່າສານ ບໍ່ທັນອະທິບາຍສິດໃຫ້ຄູ່ຄວາມຢ່າງລະອຽດຈະແຈ້ງ ຈຶ່ງເຮັດໃຫ້ຄູ່ຄວາມເສຍສິດໃນການຂໍອຸທອນ ຫຼື ຂໍລົບລ້າງ, ມີການຈອງແລ້ວແຕ່ບໍ່ຍື່ນຄຳຮ້ອງ ຫຼື ບາງກໍລະນີ ມີການຂໍອຸທອນ ຫຼື ຂໍລົບລ້າງ ແຕ່ບໍ່ແຈ້ງໃຫ້ຝ່າຍກົງກັນຂ້າມຊາບ. ສະນັ້ນ, ເພື່ອໃຫ້ມີຄວາມສອດຄ່ອງ ຕາມຫຼັກການຂອງການດຳເນີນຄະດີ ແລະ ໃຫ້ມີຄວາມເປັນເອກະພາບກັນ.

ປະທານສານປະຊາຊົນສູງສຸດ ອອກຄຳແນະນຳດັ່ງນີ້:

1. ພາຍຫຼັງໄດ້ປະກາດຄຳຕັດສິນ ຫຼື ຄຳພິພາກສາແລ້ວ ຈ່າສານ ຕ້ອງອະທິບາຍໃຫ້ຄູ່ຄວາມ ຫຼື ບຸກຄົນທີສາມ ຮັບຮູ້ສິດ ແລະ ພັນທະຂອງຕົນ, ກຳນົດເວລາ, ລະບຽບການ ໃນການຂໍອຸທອນ ຫຼື ຂໍລົບລ້າງຢ່າງລະອຽດຈະແຈ້ງ;
2. ສຳລັບຄະດີອາຍາ ພາຍຫຼັງຈອງຂໍອຸທອນ ຫຼື ຂໍລົບລ້າງແລ້ວ ຈ່າສານ ຕ້ອງແນະນຳໃຫ້ຄູ່ຄວາມມາຍື່ນຄຳຮ້ອງ ພາຍໃນກຳນົດເວລາ 20 ວັນ ສຳລັບການຂໍອຸທອນ, 45 ວັນ ສຳລັບການຂໍລົບລ້າງ ນັບແຕ່ມື້ຈອງເປັນຕົ້ນໄປ;

3. ສຳລັບຄະດີແພ່ງ ຖ້າມີການຈອງຂໍອຸທອນ ຫຼື ຂໍລົບລ້າງແລ້ວ ແຕ່ບໍ່ສາມາດຍື່ນຄຳຮ້ອງຕາມກຳນົດເວລາ ຈ່າສານ ຕ້ອງແນະນຳໃຫ້ຄູ່ຄວາມ ຫຼື ບຸກຄົນທີສາມ ຍື່ນຄຳຮ້ອງຕໍ່ສານຂັ້ນອຸທອນ ຫຼື ສານຂັ້ນລົບລ້າງ ກ່ອນການພິພາກສາຄະດີດັ່ງກ່າວ;

4. ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍອຸທອນ ຫຼື ຂໍລົບລ້າງແລ້ວ ຈ່າສານ ຕ້ອງແຈ້ງໃຫ້ຄູ່ຄວາມຝ່າຍກົງກັນຂ້າມຊາບ.

ເມື່ອໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຕ້ອງຄົ້ນຄວ້າ, ເຜີຍແຜ່ໃຫ້ພະນັກງານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະ ເປັນເອກະພາບ, ຖ້າຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານໄປຍັງສານປະ ຊາຊົນສູງສຸດ ເພື່ອພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ຄະນະປະຈຳສະພາແຫ່ງຊາດ (ເພື່ອລາຍງານ)
- ຫ້ອງການໄອຍະການປະຊາຊົນສູງສຸດ (ເພື່ອຕິດຕາມກວດກາ)
- ບັນດາ ຫົວໜ້າຄະນະສານ, ກົງຈັກບໍລິຫານ ທີ່ກ່ຽວຂ້ອງຂອງສານປະຊາຊົນສູງສຸດ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ)
- ບັນດາ ປະທານສານປະຊາຊົນທ້ອງຖິ່ນ ແລະ ຫົວໜ້າສານທະຫານທຸກຂັ້ນ (ເພື່ອຈັດຕັ້ງປະຕິບັດ)
- ສຳເນົາໄວ້ 2 ສະບັບ.